| Position ID: | EXC_BDEV/ITD |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** ພະນັກງານ ພັດທະນາ Back-End

**Position Name:** ***Back-End Developer***

## ❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ວິເຄາະ ແລະ ອອກແບບ ລະບົບ Backend (API Services) ຂອງທະນາຄານ;
- ຂຽນ Code Backend (API Services);
- ເປັນຜູ້ຊ່ວຍພັດທະນາ ສຳລັບທຸກໂຄງການພັດທະນາລະບົບ ກັບຜູ້ສະໜອງລະບົບ (Vendors ຫຼື Partner);
- ປະສານງານກັບ ວິຊາການພັດທະນາລະບົບ ຂອງພາກສ່ວນພາຍນອກ ຫຼື ຄູ່ຮ່ວມທຸລະກິດ ໃນການເຊື່ອມຕໍ່ ລະບົບ (System Integration);
- ປະຕິບັດການຕິດຕັ້ງລະບົບ (Deployment) ທຸກລະບົບ ຂອງຂະແໜງ;
- ຄົ້ນຄວ້າ ບັນດາເຕັກໂນໂລຊີໃໝ່ໆ ສຳລັບການຂຽນໂປຣແກຣມ ເພື່ອເພີ່ມປະສິດທິພາບ ການພັດທະນາລະບົບ Backend;
- ສ້າງຄູ່ມືການປະຕິບັດວຽກ ກ່ຽວກັບວຽກງານທີ່ຕົນຮັບຜິດຊອບ;
- ປະຕິບັດວຽກງານອື່ນໆຕາມການມອບໝາຍ ຂອງຄະນະພະແນກໄອທີ ຫຼື ຄະນະອຳນວຍການທະນາຄານຮ່ວມ ພັດທະນາ.

## ❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ <u>ປະລິນຍາຕີ</u> ຂຶ້ນໄປໃນສາຂາວິຊາ:
  - ວິສະວະກຳໄອທີ;
  - ວິສະວະກຳຄອມພິວເຕີ;
  - ວິທະຍາສາດຄອມພິວເຕີ ຫຼື ສາຂາທີ່ກ່ຽວຂ້ອງ.

## ❖ ກ່ຽວກັບຜູ້ສະໝັກ (About Applicant):

- ມີປະສົບການໃນການພັດທະນາລະບົບ Back-End ຢ່າງຕ່ຳ 03 ປີ;
- ມີຄວາມສາມາດໃນການພັດທະນາ Web Service API ດ້ວຍພາສາໂປຣແກຣມໃດໜຶ່ງ ໃນລະດັບຊ່ຽວຊານ ໃນ ບັນດາພາສາໂປຣແກຣມດັ່ງນີ້: Node JS, Spring Boot, C#, .net Core;
- ມີປະສົບການໃນການພັດທະນາລະບົບໃນຮູບແບບ MVC ໃນລະດັບດີ;
- ມີຄວາມສາມາດໃນດ້ານຖານຂໍ້ມູນ: Oracle, SQL Server, MySQL, Mongo DB ໃນລະດັບດີ;
- ມີຄວາມສາມາດໃນການພັດທະນາ Microservice, PLSQL, GIT, Docker ແລະ ການ Deploy Application ຈະພິຈາລະນາເປັນພິເສດ;
- ມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ.ມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ.